# ຂ່າວສໍາຄັນກ່ຽວກັບການຄຸ້ມຄອງສຸຂະພາບຂອງທ່ານ

ເຖິງທ່ານຜູ້ໄດ້ຮັບຜົນປະໂຫຍດ:

ຂ່າວດີ! ກົດໝາຍໃໝ່ຂອງ California ໝາຍຄວາມວ່າຂອບເຂດການຈໍາກັດຜົນປະໂຫຍດ Medi-Cal ຂອງທ່ານອາດປ່ຽນແປງເປັນຂອບເຂດຜົນປະໂຫຍດ Medi-Cal ເຕັມຮູບແບບ.

**ກົດໝາຍໃໝ່ແມ່ນຫຍັງ?**

ເລີ່ມວັນທີ **1 ມັງກອນ 2020**, ກົດໝາຍໃໝ່ຂອງ California ຈະໃຫ້ຂອບເຂດ Medi-Cal ເຕັມຮູບແບບໃຫ້ກັບເດັກໜຸ່ມອາຍຸຕໍ່າກວ່າ 26 ປີ. ສະຖານະພາບການເຂົ້າເມືອງຂອງທ່ານບໍ່ກ່ຽວຂ້ອງ. ທ່ານຍັງຈະຕ້ອງໄດ້ບັນລຸລະບຽບການໄດ້ຮັບສິດອື່ນໆທັງໝົດຂອງ Medi-Cal.

**ຂອບເຂດເຕັມຮູບແບບຂອງ Medi-Cal ແມ່ນຫຍັງ?**

Medi-Cal ສະໜອງການດູແລສຸຂະພາບບໍ່ເສຍຄ່າ ຫຼື ລາຄາຕໍ່າສໍາລັບບາງຄົນທີ່ອາໄສຢູ່ໃນ California. ຂອບເຂດເຕັມຮູບແບບຂອງ Medi-Cal ຄຸ້ມຄອງຫຼາຍກວ່າບໍ່ພຽງແຕ່ການດູແລສຸກເສີນ. ມັນລວມມີການດູແລທາງການແພດ, ແຂ້ວ, ສຸຂະພາບຈິດ, ແລະ ການເບິ່ງເຫັນ (ສາຍຕາ). ຂອບເຂດເຕັມຮູບແບບຂອງ Medi-Cal ຍັງຄົງຄຸ້ມຄອງການປິ່ນປົວການຕິດເຫຼົ້າ ແລະ ການໃຊ້ຢາເສບຕິດ, ການໃຫ້ຢາທີ່ທ່ານໝໍຂອງທ່ານສັ່ງໃຫ້, ແລະ ອີກຫຼາຍຢ່າງ. ມັນສາມາດສະໜອງການເດີນທາງໄປຫາທ່ານໝໍ ແລະ ປົວແຂ້ວ ແລະ ເພື່ອໄປຮັບຢາຂອງທ່ານ. ເພື່ອຮຽນຮູ້ເພີ່ມຕື່ມກ່ຽວກັບ Medi-Cal, ໃຫ້ອ່ານ ຄໍາຖາມທີ່ຖືກຕາມເລື້ອຍໆ (FAQs) ທີ່ມາກັບຈົດໝາຍສະບັບນີ້.

ຂອບເຂດເຕັມຮູບແບບຂອງ Medi-Cal ແມ່ນແຕກຕ່າງຈາກຂອບເຂດ Medi-Cal ແບບຈໍາກັດທີ່ທ່ານມີດຽວນີ້. ຂອບເຂດ Medi-Cal ແບບຈໍາກັດໄດ້ຄຸ້ມຄອງບາງການບໍລິການແຕ່ບໍ່ໄດ້ຄຸ້ມຄອງສິ່ງທີ່ເປັນການຢາ ຫຼື ການດູແລຫຼັກ. ຖ້າຫາກທ່ານມີຂອບເຂດແບບຈໍາກັນທີ່ກ່ຽວກັບການຖືພາຂອງ Medi-Cal, ທ່ານກໍ່ມີການບໍລິການທີ່ໄດ້ຄຸ້ມຄອງທັງໝົດຂອງ Medi-Cal, ຕາບໃດທີ່ການບໍລິການທາງການຢາທີ່ຈໍາເປັນ.

**ຂ້ອຍຈະໄດ້ຮັບການບໍລິການດູແລສຸຂະພາບໄດ້ແນວໃດ?**

ເມື່ອທ່ານໄດ້ລົງທະບຽນເຂົ້າໃນຂອບເຂດເຕັກຮູບແບບຂອງ Medi-Cal, ທ່ານຈະໄດ້ຮັບການບໍລິການດູແລສຸຂະພາບເກືອບທັງໝົດຜ່ານແຜນການສຸຂະພາບຂອງ Medi-Cal. ແຜນການສຸຂະພາບຂອງ

Medi-Cal ແມ່ນແຜນການປະກັນໄພສຸຂະພາບທີ່ຄຸ້ມຄອງການບໍລິການຂອງ Medi-Cal. ແຕ່ລະແຜນການໄດ້ມີການລະບຸຜູ້ສະໜອງຕ່າງໆ. ທ່ານສາມາດເລືອກແຜນການສຸຂະພາບໃດໜຶ່ງຂອງ Medi-Cal ທີ່ບໍລິການໃນເມືອງທີ່ທ່ານຢູ່. ເພື່ອຮຽນຮູ້ເພີ່ມຕື່ມກ່ຽວກັບທາງເລືອກແຜນການສຸຂະພາບ Medi-Cal ຂອງທ່ານ, ໄປທີ່ https://www.healthcareoptions.dhcs.ca.gov/.

ກັບຂອບເຂດ Medi-Cal ແບບຈຳກັດທີ່ທ່ານມີດຽວນີ້, ທ່ານຄວນມີ Medi-Cal Benefits Identification Card (BIC). BIC ແມ່ນບັດປຣາສະຕິກ. ມັນມີຮູບອອກແບບເປັນ "ດອກປັອບປີ້" ຫຼື "ສີຟ້າ ແລະ ຂາວ". ເມື່ອທ່ານໄປຮັບການດູແລ, ທ່ານໝໍ ຫຼື ຄລີນິກຂອງທ່ານຈຳເປັນຕ້ອງໄດ້ເບິ່ງບັດ BIC ຂອງທ່ານ. ໃຫ້ເອົາບັດ BIC ຂອງທ່ານໄປນຳຕະຫຼອດເວລາເມື່ອໄປຫາແພດ ແລະ ປົວແຂ້ວທັງໝົດ. ຖ້າຫາກທ່ານລົງທະບຽນເຂົ້າໃນຂອບເຂດເຕັມຮູບແບບຂອງ Medi-Cal, ທ່ານຈະໄດ້ໃຊ້ບັດ BIC ຂອງທ່ານໄປເລື້ອຍໆ. ຖ້າຫາກທ່ານຕ້ອງການບັດ BIC ໃໝ່, ກະລຸນາໂທຫາ ຫ້ອງການເມືອງຂອງທ່ານສຳລັບບັດໃໝ່.

ເມື່ອທ່ານລົງທະບຽນເຂົ້າໃນແຜນການສຸຂະພາບຂອງ Medi-Cal, ທ່ານກໍ່ຍັງຈະໄດ້ຮັບບັດແຜນການສຸຂະພາບຈາກແຜນການສຸຂະພາບໃໝ່ຂອງ Medi-Cal. ເມື່ອທ່ານໄປພົບທ່ານໝໍ, ໝໍແຂ້ວ, ແລະ ຜູ້ສະໜອງທາງການແພດອື່ນໆຂອງທ່ານ, ໃຫ້ສະແດງທັງບັດ BIC ແລະ ບັດແຜນການສຸຂະພາບຂອງທ່ານສະເໝີ.

**ຂ້ອຍຈະຮູ້ໄດ້ແນວໃດຖ້າຫາກຂ້ອຍໄດ້ຮັບຂອບເຂດ Medi-Cal ເຕັມຮູບແບບ?**

ທ່ານຈະໄດ້ຮັບຈົດໝາຍສົ່ງມາເພື່ອບອກທ່ານ ຖ້າຫາກວ່າທ່ານສາມາດຮັບເອົາຜົນປະໂຫຍດຂອບເຂດ Medi-Cal ເຕັມຮູບແບບ.

**ຂ້ອຍຕ້ອງເຮັດຫຍັງອີກບໍໃນຕອນນີ້?**

ບໍ່. ຜົນປະໂຫຍດ Medi-Cal ຂອງທ່ານແມ່ນບໍ່ໄດ້ປ່ຽນແປງໃນຕອນນີ້, ດັ່ງນັ້ນຈຶ່ງບໍ່ຕ້ອງເຮັດຫຍັງເທື່ອ. ຍ້ອນວ່າທ່ານໄດ້ມີຂອບເຂດທີ່ຈຳກັດຂອງ Medi-Cal ແລ້ວ, ທ່ານ **ບໍ່** ຕ້ອງປະກອບແບບຟອມສະໝັກໃໝ່ຂອງ Medi-Cal. ແຕ່ຖ້າຫາກທ່ານໄດ້ຮັບຊຸດຊອງໃນຈົດໝາຍເພື່ອຕໍ່ Medi-Cal ໃໝ່ຂອງທ່ານ, ທ່ານຄວນປະກອບມັນ.

**ຂ້ອຍສາມາດຮຽນຮູ້ ຫຼື ຮັບການຊ່ວຍເຫຼືອໄດ້ຢູ່ໃສ?**

ເພື່ອຮຽນຮູ້ເພີ່ມຕື່ມກ່ຽວກັບ Medi-Cal ສຳລັບເດັກໜຸ່ມ ຫຼື ຮັບການຊ່ວຍເຫຼືອ:

- ໂທສາຍດ່ວນການຊ່ວຍເຫຼືອຂອງ Medi-Cal ທີ່ 1-800-541-5555. ບໍ່ເສຍຄ່າໂທ.
- ໄປທີ່ເວັບໄຊ້ລ໌ຂອງ Department of Health Care Services ທີ່: https://www.dhcs.ca.gov/services/medi-cal/eligibility/Pages/YoungAdultExp.aspx.

*ສຳລັບຄຳຖາມກ່ຽວກັບການເຂົ້າເມືອງ, ລວມທັງທີ່ກ່ຽວຂ້ອງກັບໂຄງການ Medi-Cal:*

ກອງທຶນຂອງ California Department of Social Services (CDSS) ໄດ້ຖືກຈັດເປັນອົງການບໍ່ຫວັງຜົນກຳໄລເພື່ອສະໜອງການບໍລິການໃຫ້ຄົນເຂົ້າເມືອງຜູ້ທີ່ອາໄສຢູ່ໃນລັດຂອງ California.

ລາຍຊື່ຜູ້ສະໜອງຕ່າງໆແມ່ນມີໃຫ້ທີ່ເວັບໄຊ້ລ໌ຂອງ CDSS ທີ່: https://www.cdss.ca.gov/Benefits-Services/More-Services/Immigration-Services/Immigration-Services-Contractors.

ສຳລັບຂໍ້ມູນເພີ່ມຕື່ມກ່ຽວກັບການເຂົ້າເມືອງ ແລະ ແຫຼ່ງຂໍ້ມູນຕ່າງໆ, ກະລຸນາໄປທີ່ເວັບໄຊ້ລ໌ແນະນຳການເຂົ້າເມືອງຂອງ California's ທີ່: https://immigrantguide.ca.gov/.

ຂໍຂອບໃຈ,

Department of Health Care Services